# ເອກະສານໂຄສະນາ - ປາຖະກະຖາ
# ວັນຊາດທີ 2 ທັນວາ ຄົບຮອບ 46 ປີ
**( 2 ທັນວາ 1975 - 2 ທັນວາ 2021 )**

## I. ມູນເຊື້ອ ແລະ ຄວາມໝາຍສຳຄັນຂອງວັນຊາດ 2 ທັນວາ.

- ຊາດລາວແມ່ນຊາດໜຶ່ງທີ່ມີປະຫວັດສາດອັນຍາວນານຫຼາຍພັນປີ, ມີມູນເຊື້ອທີ່ສະຫງ່າອົງອາດແຫ່ງການຕໍ່ສູ້ຕ້ານການຮຸກຮານ ຂອງສັດຕູຈາກພາຍນອກ ແລະ ສ້າງສາພັດທະນາ.

ໂດຍສືບທອດມູນເຊື້ອອັນອົງອາດຂອງບັນພະບູລຸດດັ່ງກ່າວນັ້ນ, ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໄດ້ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ **2** ທັນວາ **1975.** ລັດປະຊາທິປະໄຕ ປະຊາຊົນ ແມ່ນລັດທີ່ເກີດຈາກການຕໍ່ສູ້ເສຍສະຫຼະອັນໃຫຍ່ຫຼວງຂອງປະຊາຊົນລາວບັນດາເຜົ່າ, ລັດທີ່ມາຈາກປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ.

ວັນທີ 2 ທັນວາ ແມ່ນວັນທີ່ມີຄວາມໝາຍສຳຄັນ ສຳລັບທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວ

- ວັນທີ **2** ທັນວາ **1975** ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ເປັນພັນໆປີຂອງຊາດລາວເຮົາ; ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫຼະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ; ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆ ໃນເວທີປະຊາຄົມໂລກ.
- ວັນທີ 2 ທັນວາ ແມ່ນວັນແຫ່ງສັນຕິພາບ, ວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ.

ປະທານ ໄກສອນ ພົມວິຫານ ໄດ້ຕີລາຄາ ວັນທີ **2** ທັນວາ ປີ **1975** ດັ່ງນີ້: " ບໍ່ທັນມີເວລາໃດທີ່ປະຊາຊົນເຮົາ ເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດນັ້ນ ໄດ້ຍາດເອົາໄຊຊະນະສົມບູນ, ເຖິງຖອງ ແລະ ບໍລິບູນໄດ້ຢ່າງສະຫງ່າລາສີຄືແນວນີ້ຈັກເທື່ອ. ໄຊຊະນະນັ້ນ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດຂອງປະເທດເຮົາ, ຫາກຍັງເປັນຄັ້ງທຳອິດທີ່ປະຊາຊົນບັນດາເຜົ່າ ຜູ້ເຄີຍດຳລົງຊີວິດເປັນທາດ ໄດ້ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງ ທີ່ມີເອກະລາດ, ມີອິດສະຫຼະພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ສັງຄົມນິຍົມ, ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າຂອງປວງຊົນລາວ ກໍຄືຂອງມວນມະນຸດປະກົດເປັນຈິງຢູ່ບົນພື້ນແຜ່ນດິນອັນແສນຮັກຂອງພວກເຮົາ ".

## II. 46 ປີ ແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 1. ໄລຍະ 10 ປີ ແຫ່ງການຟື້ນຟູເສດຖະກິດ-ວັດທະນະທຳ - ສັງຄົມ (1975 - 1985)

- ປະຕິບັດສອງໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃນດ້ານເສດຖະກິດ, ພັກເຮົາສູ້ຊົນປະຕິບັດແຜນນະໂຍບາຍສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງຕາມທິດສັງຄົມນິຍົມ, ປຸກລະດົມປະຊາຊົນເຂົ້າຮ່ວມໃນສະໜາມຮົບຜະລິດກະສິກຳ, ປ່າໄມ້ ໂດຍການນຳໃຊ້ເຕັກນິກໃໝ່ເຂົ້າສູ່ການຜະລິດ, ສ້າງຊົນລະປະທານ ເຮັດກະເສດສຸມ, ເຮັດນາແຊງ; ສ້າງປັດໄຈໃໝ່ໃຫ້ແກ່ການສືບຕໍ່ຂະຫຍາຍຜະລິດກະສິກຳ - ປ່າໄມ້. ໄດ້ຟື້ນຟູການຜະລິດຂອງໂຮງຈັກ, ໂຮງງານແຕ່ລະຂະໜາດເຊັ່ນ:ໂຮງງານໄຟຟ້າ,

ນ້ຳປະປາ, ສ້ອມແປງກົນຈັກພື້ນຖານໂຮງເລື່ອຍ ແລະ ປຸງແຕ່ງໄມ້, ໂຮງງານຜະລິດເບຍ, ນ້ຳຫວານ, ໂຮງງານຕ່ຳແຜ່ນ ແລະ ອື່ນໆ.

ທາງດ້ານສັງຄົມ, ພັກຖືສຳຄັນ ແລະ ເອົາໃຈໃສ່ປະຕິບັດນະໂຍບາຍສາມັກຄີລະຫວ່າງເຜົ່າ, ຊັ້ນຄົນເພດໄວ ແລະ ສາສະໜາໃນວົງຄະນະຍາດແຫ່ງຊາດ ບົນພື້ນຖານພັນທະພາບກຳມະກອນ - ຊາວກະສິກອນພາຍໃຕ້ການນຳພາຂອງພັກ, ປະຕິບັດສິດສະເໝີພາບຂອງພົນລະເມືອງ. ເອົາໃຈໃສ່ຂະຫຍາຍການສຶກສາ ແລະ ບຳລຸງວັດທະນະທຳ, ລຶບລ້າງຄວາມບໍ່ຮູ້ໜັງສື, ຍົກລະດັບຄວາມຮູ້ຂອງປະຊາຊົນໃຫ້ສູງຂຶ້ນ, ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ.

- ໄລຍະປະຕິບັດແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຄັ້ງທີ I (1981 - 1985) ເຖິງວ່າປະເທດຊາດຈະຢູ່ໃນສະພາບທີ່ມີຄວາມຫຍຸ້ງຍາກສັບສົນຫຼາຍດ້ານກໍຕາມ, ແຕ່ພາຍໃຕ້ການນຳພາຂອງພັກ, ປະຊາຊົນລາວບັນດາເຜົ່າໄດ້ສາມັກຄີກັນຜ່ານຜ່າທຸກຄວາມຫຍຸ້ງຍາກ ແລະ ສາມາດບັນລຸຜົນສຳເລັດທີ່ສຳຄັນຫຼາຍປະການ ໃນນັ້ນ, ຍອດຜະລິດຕະພັນສັງຄົມ ປີ 1985 ເພີ່ມຂຶ້ນ 54%, ລາຍຮັບແຫ່ງຊາດເພີ່ມຂຶ້ນ 48% ທຽບໃສ່ປີ 1980, ການຜະລິດກະສິກຳຂະຫຍາຍຕົວທຸກປີ, ປີ 1985 ປະລິມານເຂົ້າເປືອກບັນລຸເຖິງ 1,4 ລ້ານໂຕນສະເລ່ຍຕໍ່ຫົວຄົນໄດ້ 375 ກິໂລຕໍ່ປີ, ສາມາດກຸ້ມຕົນເອງທາງດ້ານທັນຍາຫານໂດຍພື້ນຖານ; ປະລິມານຜະລິດອຸດສາຫະກຳເພີ່ມຂຶ້ນ 42% ທຽບໃສ່ປີ 1980, ຫັດຖະກຳທີ່ເປັນມູນເຊື້ອຂອງປະຊາຊົນໄດ້ຮັບການຟື້ນຟູ ແລະ ຂະຫຍາຍຕົວ; ພື້ນຖານໂຄງລ່າງດ້ານຄົມມະນາຄົມ - ຂົນສົ່ງໄປສະນີ ແລະ ກໍ່ສ້າງ ໄດ້ຮັບການກໍ່ສ້າງ ແລະ ຟື້ນຟູຍົກລະດັບຂຶ້ນໄດ້ 844 ກິໂລແມັດ, ໄດ້ສ້ອມແປງ ແລະ ສ້າງຂົວໃໝ່ຫຼາຍແຫ່ງເຊັ່ນ: ຂົວນ້ຳງື່ມ, ຂົວນ້ຳກະດິງ, ຂົວເຊບັ້ງຫຽງ ແລະ ອື່ນໆ ຕາມເສັ້ນທາງເລກ 9 ແລະ ເລກທີ 13; ການຂົນສົ່ງທາງບົກ ແລະ ທາງນ້ຳໄດ້ຂະຫຍາຍຕົວເພີ່ມຂຶ້ນ; ຂະຫຍາຍຕາໜ່າງການສື່ສານໄປສະນີ, ໂທລະ ສັບ ແລະ ໂທລະເລກ, ສ້າງສະຖານນີດາວທຽມດອກບົວສຳເລັດ, ມີລະບົບໂທລະສັບທາງໄກຕິດຕໍ່ກັບ 45 ປະເທດໃນໂລກ.

ການສຶກສາ ແລະ ວັດທະນະທຳ - ສັງຄົມ ກໍມີບາດກ້າວຂະຫຍາຍຕົວໃໝ່, ທ້າຍປີ 1985 ໄດ້ສຳເລັດການລຶບລ້າງຄວາມບໍ່ຮູ້ໜັງສືໃນທົ່ວປະເທດໂດຍພື້ນຖານ.

ສັງລວມການປະຕິບັດຈຸດໝາຍຂອງແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ແຫ່ງຊາດ ຄັ້ງທີ I ສຳເລັດໂດຍພື້ນຖານ, ປະກອບສ່ວນສ້າງປະຖົມປັດໄຈ ແລະ ເງື່ອນໄຂສະດວກໃຫ້ແກ່ການສືບຕໍ່ກ້າວຂຶ້ນຂອງປະເທດຊາດ.

**2. ໄລຍະ 35 ປີແຫ່ງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ (ແຕ່ປີ 1986 ເຖິງປັດຈຸບັນ).**

ຜ່ານການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ ເລີ່ມແຕ່ປີ 1986 ເປັນຕົ້ນມາ, ເຖິງວ່າປະເທດຊາດເຮົາໄດ້ພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການກໍຕາມ, ແຕ່ພວກເຮົາກໍສາມາດຍາດໄດ້ຜົນງານ ແລະ ໄຊຊະນະອັນໃຫຍ່ຫຼວງທີ່ມີຄວາມໝາຍປະຫວັດສາດເຊິ່ງສະແດງອອກໃນແຕ່ລະດ້ານ ດັ່ງນີ້:

**① ດ້ານການເມືອງ:**

ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ທີ່ເປັນແກນນຳໃນລະບົບການເມືອງປະຊາທິປະໄຕ ປະຊາຊົນ, ລະບົບການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນ ແຕ່ລະຂັ້ນໄດ້ຮັບການປັບປຸງບູລະນະ ໃຫ້ໜັກແໜ້ນ, ເຂັ້ມແຂງ; ຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນ

ຄົບຖ້ວນຂອງປະເທດຊາດ ໄດ້ຮັບການປົກປັກຮັກສາໄວ້ໄດ້ຢ່າງໝັ້ນຄົງ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

② **ການພັດທະນາເສດຖະກິດ:**

ສປປ ລາວ ໄດ້ມີຜົນສໍາເລັດອັນສໍາຄັນ ແລະ ມີບາດກ້າວຂະຫຍາຍຕົວຕໍ່ເນື່ອງ, ໝັ້ນທ່ຽງ. ອັດຕາການເຕີບໂຕຂອງເສດຖະກິດສະເລ່ຍເພີ່ມຂຶ້ນ ໃນແຕ່ລະໄລຍະເຊັ່ນ: **1990** ສະເລ່ຍ **4,8%** ຕໍ່ປີ, **1995** ເພີ່ມຂຶ້ນ **6,4%, 2005** ໄດ້ **6,2%, 2010** ສະເລ່ຍ **7,9%, 2015** ບັນລຸໄດ້ **7, 8%,** ຄາດຄະເນ ໝົດປີ **2020** ຂະຫຍາຍຕົວຢູ່ໃນລະດັບ 3,3**%** ຫາ 3,6**%**, **2021** ຄາດຈະຂະຫຍາຍຕົວຢູ່ໃນລະດັບ **3,0%** ຍ້ອນການລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວ. **GDP** ສະເລ່ຍຕໍ່ຫົວຄົນ ກໍເພີ່ມຂຶ້ນ ເຊັ່ນ: ປີ **1985** ບັນລຸໄດ້ **114** ໂດລາສະຫະລັດ, ປີ **1995** ໄດ້ **380** ໂດລາ, ປີ **2006** ໄດ້ **534** ໂດລາ, ປີ **2015** ບັນລຸໄດ້ **1.970** ໂດລາ **2020** ໄດ້ **2.742** ໂດລາສະຫະລັດ ແລະ **2021** ໄດ້ **2.649** ໂດລາສະຫະລັດ.

**(1) ວຽກງານກະສິກໍາ - ປ່າໄມ້ ແລະ ການພັດທະນາຊົນນະບົດ.**

- ການຜະລິດເຂົ້າຂະຫຍາຍຕົວມາເປັນກ້າວໆ, ສາມາດຜະລິດເຂົ້າກິນພຽງພໍ, ກຸ້ມກິນ, ມີສ່ວນແຮໄວ້ ແລະ ຂາຍເປັນສິນຄ້າສົ່ງອອກນັບມື້ເພີ່ມຂຶ້ນໃນແຕ່ລະປີຄື:

ປີ 1990 ສາມາດຜະລິດເຂົ້າໄດ້ 1.491.495 ໂຕນ ເນື້ອທີ່ 650.300 ເຮັກຕາ, ສະມັດຕະພາບການຜະລິດ 2,29 ໂຕນຕໍ່ເຮັກຕາ; ປີ 2000 ຜະລິດໄດ້ 2.201.700 ໂຕນເນື້ອທີ່ 719.370 ເຮັກຕາ, ສະມັດຕະພາບການຜະລິດ 3,06 ໂຕນຕໍ່ເຮັກຕາ; ປີ 2010 ຜະລິດໄດ້ 2.321.330 ໂຕນ ໃນເນື້ອທີ່ 627.865 ເຮັກຕາ, ສະມັດຕະພາບການຜະລິດ 3,71 ໂຕນຕໍ່ເຮັກຕາ, ໃນປີ 2015 ຜະລິດໄດ້ 4,1 ລ້ານໂຕນ, ໃນປີ 2020 ຜະລິດໄດ້ 3,5 ລ້ານໂຕນ,ໃນປີ 2021 ຄາດວ່າຈະສາມາດຜະລິດໄດ້ 3,66 ລ້ານໂຕນ. ສໍາລັບການປູກພືດ, ຜັກ ແລະ ໝາກໄມ້ຕ່າງໆ ໃນປີ 2020 ປະຕິບັດໄດ້ ປະມານ 85.477 ເຮັກຕາ, ຄາດວ່າຜົນຜະລິດຈະໄດ້ຮັບ ປະມານ 813.970 ກວ່າໂຕນ ເທົ່າກັບ 68% ຂອງແຜນການ, ການຜະລິດພືດລະດູແລ້ງ ປະຕິບັດໄດ້ໃນເນື້ອທີ່ 14.518 ກວ່າເຮັກຕາ.

ໃນປີ **2021** ປະຕິບັດໄດ້ ປະມານ 192.851 ເຮັກຕາ, ເທົ່າກັບ 71,60% ຂອງແຜນການຄາດຄະເນຜົນການຜະລິດຈະປະຕິບັດໄດ້ 2,07 ລ້ານໂຕນ.

ສ່ວນການຜະລິດຊີ້ນປາ ສມາດປະຕິບັດໄດ້ 333,130 ໂຕນ, ເທົ່າກັບ 68,95% ຂອງແຜນ ໃນນັ້ນຜະລິດຊີ້ນໄດ້ 165.580 ໂຕນ, ໄຂ່ 34.500 ໂຕນ ແລະ ປາ (ປາລ້ຽງ ແລະ ປາທໍາມະຊາດ ) ໄດ້ 13.050 ໂຕນ. ໃນປີ 2021 ອັດຕາການຂະຫຍາຍຕົວສັດລ້ຽງ ຢູ່ໃນລະດັບ 5-6% ຕໍ່ປີ.ໃນປີຜ່ານມາ ມີສັດລ້ຽງຈໍານວນທັງໝົດ 57,57 ລ້ານໂຕ, ຄວາຍ ຈໍານວນ 1,24 ລ້ານໂຕ, ງົວ ຈໍານວນ 2,22 ລ້ານໂຕ, ໝູ ຈໍານວນ 4,39 ລ້ານໂຕ, ແກະ/ແບ້ ຈໍານວນ 715. 000 ໂຕ ແລະ ສັດປີກ 49 ລ້ານໂຕ.

❖ **ວຽກງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ.**

ພັກເຮົາຖືເອົາໃຈໃສໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຊິ່ງຖືເປັນວຽກສໍາຄັນ ແລະ ເປັນບູລິມະສິດໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາໃນແຕ່ລະໄລຍະ ໂດຍສະເພາະພາຍຫຼັງພັກເຮົາໄດ້ວາງແນວທາງປ່ຽນແປງໃໝ່ ໄດ້ເອົາໃຈໃສໃນວຽງານປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໂດຍໄດ້ສຸມໃສ່ການແກ້ໄຂສະບຽງອາຫານ ແລະ ຢຸດຕິການຖາງປ່າເຮັດໄຮ່; ວຽງານທີສໍາຄັນໃນການພັດທະນາຊົນນະບົດ ໄດ້ສຸມໃສ່ການຂະຫຍາຍພື້ນຖານໂຄງລ່າງ, ສ້າງເສັ້ນທາງຊົນນະບົດ ແລະ ຂະຫຍາຍຊົນລະປະທານຂະໜາດນ້ອຍ, ຊຸກຍູ້ປະຊາຊົນເຮັດນາ, ການຫຼຸດຜ່ອນຄວາມທຸກຍາກ

ຂອງປະຊາຊົນ ໄດ້ດຳເນີນໄປຢ່າງເປັນຂະບວນຟົດຟື້ນ; ປີ 2000 ຄອບຄົວທຸກຍາກ ມີ 266 000 ຄອບຄົວ, ປີ2001-2005 ການຫຼຸດຜ່ອນຄອບຄົວທຸກຍາກຂອງປະຊາຊົນ ໄດ້ສືບຕໍ່ເປັນເປົ້າໝາຍບູລິມະສິດໃນການພັດທະນາເສດຖະກິດສັງຄົມຂອງປະເທດເຮົາ ເຊິ່ງລັດຖະບານ ໄດ້ຮັບຮອງເອົາຍຸດທະສາດເພື່ອຂະຫຍາຍຕົວ ແລະ ລຶບລ້າງຄວາມທກຍາກໄດ້ກຳນົດເອົາ 72 ເມືອງທຸກຍາກ ແລະ 47 ເມືອງທຸກຍາກທີ່ສຸດເພື່ອເປັນບູລິມະສິດໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຊຸມປີ2011-ປີ2015 ໄດ້ເອົາໃຈໃສ່ຫັນລົງສູ່ຮາກຖານສຸມໃສ່ສ້າງບ້ານ ແລະ ຈຸດສຸມພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ ແລະ ສ້າງການຫັນປ່ຽນໃໝ່ຢ່າງຮອບດ້ານ ເປັນຕົ້ນເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ ແລະ ເຂດທີ່ໝັ້ນພື້ນຖານຂອງການປະຕິວັດມາເຖິງ ປີ 2015 ຄອບຄົວທຸກຍາກຍັງເຫຼືອ 76.604 ຄອບຄົວ ເທົ່າກັບ 6,59% ຂອງຈຳນວນ 1.166.239 ຄອບຄົວ ໃນທົ່ວປະເທດ, ບ້ານທຸກຍາກຍັງເຫຼືອ 1.736 ບ້ານ ເທົ່າກັບ 20,50% ຂອງຈຳນວນ 8.514 ບ້ານ ໃນທົ່ວປະເທດ, ເມືອງທຸກຍາກຍັງມີ 23 ເມືອງ ກວມເອົາ 15,54% ຂອງຈຳນວນ 148 ເມືອງໃນທົ່ວປະເທດ. ປີ 2019 ຄອບຄົວທຸກຍາກຍັງເຫຼືອ 62.384 ຄອບຄົວ ເທົ່າກັບ 5,16% ຂອງຈຳນວນຄອບຄົວທັງໝົດໃນທົ່ວປະເທດ, ບ້ານທຸກຍາກຍັງເຫຼືອ 1.424 ບ້ານ ເທົ່າກັບ 16,82% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ, ສຳລັບເມືອງທຸກຍາກຍັງ 23 ເມືອງ.

ປີ **2021** ຄາດວ່າຈະສາມາດບັນລຸຄົບມາດຖານສ້າງຄອບຄົວທຸກຍາກພົ້ນທຸກ ໄດ້ 13.079 ຄອບຄົວ ຂອງຈຳນວນຄອບຄົວທັງໝົດໃນທົ່ວປະເທດ, ບ້ານທຸກຍາກຍັງເຫຼືອ 1.351.ປີ (2021 ຈະສາມາດສ້າງຜ່ານພົ້ນທຸກ ໄດ້ 237 ບ້ານ) ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ, ສຳລັບເມືອງທຸກຍາກຍັງ 23 ເມືອງ.

- ການພັດທະນາຊົນນະບົດ ແລະ ການສ້າງບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດຕາມທິດ 3 ສ້າງ (ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ) ໄດ້ສ້າງເງື່ອນໄຂໃຫ້ຫຼາຍບ້ານໄດ້ຮັບການພັດທະນາ ແລະ ສາມາດປະກາດເປັນບ້ານພັດທະນາ, ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ເຊັ່ນ: ສາມາດສ້າງບ້ານພັດທະນາໄດ້ 2.694 ບ້ານຈາກ 883 ບ້ານ ເປັນ 3.577 ບ້ານ ໃນປີ 2015, ສ່ວນບ້ານພົ້ນທຸກທີ່ຍັງບໍ່ທັນໄດ້ເປັນບ້ານພັດທະນາມີ ຈຳນວນ 1.736 ບ້ານ ເທົ່າກັບ 37,27%.

ປີ 2019 ສາມາດສ້າງບ້ານພັດທະນາ ໄດ້ 167 ບ້ານຈາກ 4.138 ບ້ານ ໃນປີ 2018 ມາເປັນ 4.305 ບ້ານ; ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ໄດ້ 10 ບ້ານ, ເຮັດໃຫ້ບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດໄດ້ເພີ່ມຂຶ້ນຈາກ 56 ບ້ານ ໃນປີ 2018 ມາເປັນ 66 ບ້ານ ໃນປີ 2019.

ປີ **2021** ຈະສູ້ຊົນສ້າງບ້ານພັດທະນາ ໃຫ້ໄດ້ 15.022 ບ້ານຈາກ 4.305 ບ້ານ ໃນປີ 2019 ມາເປັນ 15.022 ບ້ານ; ໃນ 2020 ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ໄດ້ 10 ບ້ານ, ປີ 2021 ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດໄດ້ເພີ່ມຂຶ້ນຈາກ 72 ບ້ານ.

**(2) ວຽກງານອຸດສາຫະກຳ ແລະ ການຄ້າ.**

ວຽກງານອຸດສາຫະກຳ - ການຄ້າແມ່ນໜຶ່ງໃນໂຄງການເສດຖະກິດທີ່ສຳຄັນ, ສະນັ້ນ ພັກ - ລັດເຮົາໄດ້ຊີ້ນຳ - ນຳພາພັດທະນາຂົງເຂດນີ້ໃຫ້ມີການຂະຫຍາຍຕົວຕໍ່ເນື່ອງ. ປີ 1986 - 1990 ອຸດສາຫະກຳມີການຂະຫຍາຍຕົວເພີ່ມຂຶ້ນ ສະເລ່ຍ 8% ຕໍ່ປີ, ຕົ້ນຕໍແມ່ນອຸດສາຫະກຳປຸງແຕ່ງ. ໄລຍະປີ 2006 - 2010 ສະເລ່ຍ ອຸດສາຫະກຳຂະຫຍາຍຕົວ 12% ຕໍ່ປີ, ໄລຍະ 2011-2015 ອັດຕາການຂະຫຍາຍຕົວສະເລ່ຍ 13% ຕໍ່ປີ ແລະ ໄລຍະ 2016-2020 ຂະຫຍາຍຕົວສະເລ່ຍ ປະມານ 9,2% ຕໍ່ປີ.

ປີ **2021** ອຸດສາອຸດສາຫະກຳ ແລະ ປຸງແຕ່ງ ສາມາດປະຕິບັດໄດ້ 8.310,28 ຕື້ກີບ, ເທົ່າກັບ 60,35% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫລຸດລົງ 15,44%. ສາເຫດສຳຄັນທີ່ພາໃຫ້ການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳຫລຸຫລົງແມ່ນຈາກການແຜ່ລບາດຂອງພະຍາດໂຄວິດ -19

**+ ການຄ້າ:** ທົ່ວປະເທດມີຕະຫຼາດທັງໝົດ 856 ແຫ່ງ, ໃນນັ້ນ ມີສູນການຄ້າ 28 ແຫ່ງ, ຕະຫຼາດໃຫຍ່ 48 ແຫ່ງ, ຕະຫຼາດກາງ 145 ແຫ່ງ, ຕະຫຼາດນ້ອຍ 406 ແຫ່ງ, ຕະຫຼາດນັດ 257 ແຫ່ງ ເຮັດໃຫ້ການຈໍລະຈອນແຈກຢາຍສິນຄ້າລົງເຖິງຊົນນະບົດ, ເຂດຫ່າງໄກສອກຫຼີກ. ການສົ່ງອອກປະຕິບັດໄດ້ 5.611 ລ້ານໂດລາສະຫະລັດ, ເທົ່າກັບ 85%, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 26, 8%. ສໍາລັບການນໍາເຂົ້າ: ປະຕິບັດໄດ້ 4.452 ລ້ານໂດລາ, ເທົ່າກັບ 69,7% ,ເກີນດຸນປະມານ 1.160 ລ້ານໂດລາສະຫະລັດ.

**(3) ວຽກງານພະລັງງານ ແລະ ບໍ່ແຮ່.**

ການພັດທະນາພະລັງງານ ແລະ ບໍ່ແຮ່ແມ່ນການຂຸດຄົ້ນ ແລະ ນຳໃຊ້ທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດຕາມແນວທາງຂອງພັກເຮົາ, ຍ້ອນແນວນັ້ນການພັດທະນາໃນຂົງເຂດທີ່ໄດ້ຮັບການເອົາໃຈໃສ່ເປັນຢ່າງດີ ແລະ ມີຜົນໄດ້ຮັບຫຼາຍສົມຄວນ.

**+ ພະລັງງານ**. ໃນປັດຈຸບັນທົ່ວປະເທດພວກເຮົາມີແຫຼ່ງໄຟຟ້າ 86 ແຫ່ງ, ມີກຳລັງຕິດຕັ້ງທັງໝົດ 10.447,93 ເມກາວັດ, ສາມາດຜະລິດພະລັງງານໄຟຟ້າ ໄດ້ເຖິງ 54.050,93 ລ້ານກິໂລວັດໂມງຕໍ່ປີ ທົ່ວປະເທດມີລະບົບສາຍສົ່ງແຮງສູງ, ແຮງກາງ ແລະ ແຮງຕໍ່າ ແລະ ມີສະຖານີຈ່າຍໄຟຟ້າ 84 ແຫ່ງ ສາມາດສະໜອງໄຟຟ້າໄດ້ 100% ໃນເທດສະບານແຂວງ, ນະຄອນຫຼວງ, ເທດສະບານເມືອງ ແລະ ນະຄອນ. 93% ຂອງຈຳນວນບ້ານ ແລະ 95% ຂອງຈຳນວນຄອບຄົວໃນທົ່ວປະເທດໄດ້ໃຊ້ໄຟຟ້າແບບຖາວອນ.

ນອກນີ້, ສປປ ລາວ ຍັງຈຳໜ່າຍໃຫ້ຕ່າງປະເທດ ໄດ້ 6.423 ລ້ານເມກາວັດໂມງ ໃນນີ້ສົ່ງໄປປະເທດໄທ 5.421 ເມກາວັດ, ຫວຽດນາມ 572 ເມກາວັດ, ກຳປູເຈຍ 320 ເມກາວັດ, ມຽນມາ 10 ເມກາວັດ ແລະ ແລະ ຍັງເຊື່ອມໂຍງ ແລະ ຈຳໜ່າຍໄປ ມາເລເຊຍ 100 ເມກາວັດ.

**+ ບໍ່ແຮ່**: ເປັນຂະແໜງການໜຶ່ງທີ່ສ້າງລາຍຮັບໃຫ້ປະເທດຊາດຫຼາຍພໍສົມຄວນ ປີ 2019 ປະຕິບັດໄດ້ 10.967 ຕື້ກີບ ເທົ່າກັບ 92% ຂອງແຜນການ, ສະເພາະຕົ້ນປີ 2020 ປະຕິບັດໄດ້ 5.181 ຕື້ກີບ ເທົ່າກັບ 47% ຂອງແຜນການ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 8% ຍ້ອນບາງໂຄງການໄດ້ຢຸດຕິຄາດຄະເນໝົດປີ ການຜະລິດແຮ່ທາດຈະສາມາດປະຕິບັດໄດ້ 10.851 ຕື້ກີບ ລື່ນແຜນການປະມານ 13%. ໃນປີ **2021** ຜະລິດໄດ້ 12,602,73 ຕື້ກີບ ເທົ່າກັບ 91,21% ( ມະຕິສະພາ 13.812 ຕື້ກີບ) ໝົດປີຄາດວ່າຈະປະຕິບັດໄດ້ 15.889 ຕື້ກີບ, ລື່ນແຜນການ 15,04% ການຈຳໜ່າຍແຮ່ທາດ ທັງພາຍໃນ ແລະ ຕ່າງປະເທດ ໄດ້ 1.464,96 ລ້ານໂດລ້າສະຫະລັດ.

**(4) ວຽກງານໂຍທາທິການ ແລະ ຂົນສົ່ງ.**

ນັບແຕ່ ປີ 1975 ເປັນຕົ້ນມາ ໂດຍເລີ່ມຈາກແນວທາງອັນພື້ນຖານຂອງພັກເຮົາທີ່ວ່າ “ວຽກງານຄົມມະນາຄົມເປັນປາຍແຫຼມໃຫ້ແກ່ການພັດທະນາປະເທດຊາດ” ສະນັ້ນ, ວຽກງານຄົມມະນາຄົມໃນທົ່ວປະເທດກໍໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງທັງນັບມື້ມີຄວາມສາມາດ ເຊື່ອມຕໍ່ກັບອະນຸພາກພື້ນ, ເສັ້ນທາງແລວເສດຖະກິດຕາເວັນອອກ - ຕາເວັນຕົກ, ເໜືອ - ໃຕ້. ມີເສັ້ນທາງໄປຮອດເຂດຈຸດ

ສຸມໄປຮອດທຸກແຂວງ, ທຸກເມືອງ, ບ້ານ ແລະ ກຸ່ມບ້ານ. ປີ 1976 ທົ່ວປະເທດມີຄວາມຍາວຂອງເສັ້ນທາງພຽງແຕ່ 12.000 ກວ່າກິໂລແມັດ, ຮອດປີ 2019 ມີຄວາມຍາວຂອງເສັ້ນທາງທັງໝົດ 60.340.000 ກິໂລແມັດ, (ໃນນີ້ ທາງປູເບຕົງ, ປູຢາງອັດສະຟານ ແລະ ປູຢາງ 11.637,77 ກິໂລແມັດ ສາມາດທຽວໄດ້ຕະລອດປີໄປເຖິງທຸກເມືອງໃນທົ່ວປະເທດ, ໃນນີ້ ມີເສັ້ນທາງປູຢາງໄປເຖິງທຸກເທດສະບານແຂວງໃນທົ່ວປະເທດ ແລະ ມີ 138 ເມືອງ ມີເສັ້ນທາງປູຢາງເຂົ້າເຖິງ ຊຶ່ງກວມເອົາ 93,2%. ການຂົນສົ່ງສິນຄ້າ ແລະ ຂົນສົ່ງໂດຍສານກໍຂະຫຍາຍຕົວເພີ່ມຂຶ້ນ, ບໍລິມາດການຂົນສົ່ງໂດຍສານປະຕິບັດໄດ້ 3.848 ພັນຄົນ, ຂົນ ສົ່ງສິນຄ້າປະຕິບັດໄດ້ 2.651 ພັນໂຕນ. ເຖິງຢ່າງໃດກໍຕາມຖ້າທຽບໃສ່ອັດຕາສ່ວນການຂົນສົ່ງຜູ້ໂດຍສານ ແລະ ສິນຄ້າຈາກຖານຂໍ້ມູນປີ 2016 - 2020 ເຫັນວ່າມີອັດຕາເພີ່ມຂຶ້ນ 24%.

ປີ **2021** ການຂົນສົ່ງຄົມມະນາຄົມ ແມ່ນໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ສົ່ງຜົນກະທົບໃຫ້ກັບການບໍລະການຂົນສົ່ງສິນຄ້າ ທາງບົກ, ທາງນໍ້າ, ທາງອາກາດ ປະຕິບັດໄດ້ 4.395,10 ພັນໂຕນ ເທົ່າກັບ 38,54% ຂອງແຜນການ ແລະ ການຂົນສົ່ງຜູ້ໂດຍສານທຸກເສັ້ນທາງປະຕິບັດໄດ້ 46.216,20 ພັນຄົນ ເທົ່າກັບ 41,69% ເທົ່າກັບ 41,69%ຂອງແຜນການ ຄາດວ່າທ້າຍປີຈະສາມາດປະຕິບັດໄດ້ຕື່ມ 5.190,20 ພັນໂຕນ ແລະ 64.930 ພັນຄົນ

ໂຄງການທາງດ່ວນ ນະຄອນຫຼວງວຽງຈັນ-ວັງວຽງ ມີຄວາມຍາວ 109 ກິໂລແມັດໄດ້ເປີດນຳໃຊ້ຢ່າງເປັນທາງການ ໃນວັນທີ2 ທັນວາ 2020. ການກໍ່ສ້າງທາງລົດໄຟຄວາມໄວສູງແຕ່ບໍ່ເຕັນ - ນະຄອນຫຼວງວຽງຈັນ ມີຄວາມຍາວ 426,5 ກິໂລແມັດ ໄດ້ກໍ່ສ້າງສຳເລັດຕາມກຳນົດເວລາ ແລະ ພ້ອມຈະເປີດການນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ຢ່າງເປັນທາງການ ໃນວັນຊາດທີ 2 ທັນວາ 2021.

ການກໍ່ສ້າງທາງລົດໄຟເຊື່ອມຕໍ່ ລາວ-ໄທ ໄລຍະ II (ຕອນທີ 2) ແຕ່ສະຖານີທ່ານາແລ້ງ-ສະຖານີວຽງຈັນ (ບ້ານຄຳສະຫວາດ) ມີຄວາມຍາວທັງໝົດປະມານ 7.5 ກິໂລແມັດ ແລະ ສຳເລັດ ເປີດແລ່ນລົດໄຟຂົນສົ່ງສິນຄ້າລາວ-ໄທ.

ລະບົບນໍ້າປະປາ ກໍໄດ້ຂະຫຍາຍຕົວລົງສູ່ເທດສະບານຂອງບັນດາເມືອງໃນທົ່ວປະເທດ ແລະ ຢູ່ເຂດຊຸມຊົນ ກໍຄືກຸ່ມບ້ານໃຫຍ່ຈຳນວນໜຶ່ງ, ປະຊາກອນທີ່ອາໄສຢູ່ໃນຕົວເມືອງໄດ້ຊົມໃຊ້ນໍ້າປະປາທີ່ສະອາດປອດໄພໄດ້ 80%, ປັດຈຸບັນທົ່ວປະເທດ ໄດ້ມີໂຮງງານຜະລິດນໍ້າປະປາ 163 ແຫ່ງ, ມີກຳລັງການຜະລິດ 674,232 $ມ^3$ ຕໍ່ວັນ ສາມາດສະໜອງນໍ້າປະປາໃຫ້ປະຊາກອນໃນຕົວເມືອງ ກວມ 76%.

**(5) ວຽກງານໄປສະນີ - ໂທລະຄົມມະນາຄົມ ແລະ ການສື່ສານ.**

ວຽກງານໄປສະນີ - ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ຂະຫຍາຍຕົວໄວສົມຄວນ ແລະນັບມື້ນັບທັນເປັນທັນສະໄໝເມື່ອທຽບໃສ່ປີ 1975 ຊຶ່ງມາຮອດປັດຈຸບັນແຕ່ລະເມືອງສາມາດນຳໃຊ້ໂທລະ ສັບໄດ້ 100%.

ຂະຫຍາຍຕາໜ່າງໄປສະນີ ໄດ້ 128 ກວ່າເມືອງ, ມີຫ້ອງການ ໄປສະນີ 160 ແຫ່ງ, ຂະຫຍາຍສະຖານີຮັບສົ່ງສັນຍານໂທລະສັບມືຖືໄດ້ 1,106 ສະຖານີ ລວມທັງໝົດ 7.882 ສະຖານີ ເຮັດໃຫ້ເຄືອຄ່າຍສັນຍານໂທລະສັບມືຖື 2G-3G ແລະ 4G ຄວບຄຸມ 95%, 81% ແລະ 53% ຕາມລຳດັບຂອງບ້ານທັງໝົດໃນຂອບເຂດທົ່ວປະເທດ. ການພັດທະນາ ແລະ ປັບປຸງລະບົບຫ້ອງການທັນສະໄໝ ( $EOFFICEV_2$) ແລະ ຂະຫຍາຍການນຳໃຊ້ລະບົບຫ້ອງການທັນສະໄໝໄປ ໃນ 18 ພາກສ່ວນ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ, ນະຄອນຫລວງວຽງຈັນ, ໄດ້ພັດທະນາລະບົບປະຊຸມທາງໄກເພື່ອຮັບໃຊ້ທາງວິຊາການ ແລະ ການຮຽນການສອນ ໂດຍສະເພາະການນຳໃຊ້ຂອງພາກລັດ ແລະ ອົງການ

ຕ່າງໆ ການເປີດໃຊ້ບໍລິການ ລະບົບ 5G ໃນປີຜ່ານມາ, ກໍຄືສາຍກາບໃຍແສງ (OpticFiber) ໄດ້ 90, 258 ກິໂລແມັດ; ລົງທະບຽນນຳໃຊ້ໂທລະສັບມືຖື - ຕັ້ງໂຕະ 6,090,188 ໝາຍເລກ, ຈຳນວນຜູ້ລົງທະບຽນໃຊ້ອິນເຕີເນັດ 3,540,020 ບັນຊີ, ມີຜູ້ໃຊ້ໂທລະສັບມືຖືຜ່ານຊິມໂທ ແລະ ຊິມເນັດ ທັງໝົດ 9.5 ລ້ານເລກໝາຍ ເທົ່າກັບ 136% ທຽບໃສ່ປະຊາກອນລາວ ແລະມີປະຊາກອນທີ່ກຳລັງໃຊ້ອອນລາຍ ເຖິງ 50%, ໃນວັນທີ 21 ພະຈິກ 2015 ສຳເລັດການສົ່ງດາວທຽມຂອງ ສປປ ລາວ ຄັ້ງທຳອິດໃນຕຳແໜ່ງວົງໂຄຈອນ.

**(6) ວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.**

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ພັກ - ລັດ ເຮົາໄດ້ໃຫ້ຄວາມສຳຄັນຂອງວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຫຼາຍຂຶ້ນ ໂດຍໄດ້ວາງນະໂຍບາຍ ແລະ ກົນໄກທີ່ກ່ຽວພັນກັບວຽກງານດັ່ງກ່າວຢ່າງເປັນລະບົບຕໍ່ເນື່ອງ ພ້ອມທັງຈັດຕັ້ງປະຕິບັດມີຜົນສຳເລັດເປັນກ້າວໆ, ອັນພົ້ນເດັ່ນແມ່ນທີ່ດິນປະເພດຕ່າງໆໄດ້ຮັບການເອົາໃຈໃສ່ຄຸ້ມຄອງ ແລະ ນຳໃຊ້ດ້ານກົດໝາຍ ໄດ້ກາຍເປັນຖານລາຍຮັບສຳຄັນ ແລະ ໝັ້ນຄົງຂອງປະເທດເຮົາໃນເງື່ອນໄຂໃໝ່.

ປີ 2020 ສາມາດອອກໃບຕາດິນໄດ້ຈຳນວນ 610.000 ກວ່າຕອນ ໃນຂອບເຂດທົ່ວປະເທດ. ສຳເລັດການພັດທະນາໂປຼແກມຈົດທະບຽນທີ່ດິນ ແລະ ນຳໃຊ້ທີ່ດິນໃນ 130 ເມືອງ ໃນທົ່ວປະເທດ; ສ້າງນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມຫຼາຍສະບັບ ແລະ ສ້າງແຜນແມ່ບົດການປັບປຸງວຽກງານອຸຕຸນິຍົມ-ອຸທົກກະສາດ.

ຮອດປີ **2021** ສາມາດຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໄດ້ທັງໝົດ 60.000 ຕອນ, ເທົ່າກັບ 75 % ຂອງແຜນການ ( ມະຕິສະພາ 80.000 ຕອນ) ແລະ ຄາດຄະເນມົດປີ ຈະປະຕິບັດໄດ້ ຈຳນວນ 90.000 ຕອນ ລື່ນແຜນການ 12,50%.

**3). ຂົງເຂດວັດທະນະທຳ-ສັງຄົມ.**

**(1) ວຽກງານການສຶກສາທິການ ແລະ ກິລາ.**

**+ ການສຶກສາ:** ການສຶກສາໄດ້ຮັບການພັດທະນາເປັນກ້າວໆ ນັບທັງດ້ານປະລິມານ ແລະ ຄຸນນະພາບ.

ຈຳນວນ ໂຮງຮຽນລ້ຽງເດັກ ໃນປີ 1990 ມີ 858 ແຫ່ງ, 1995 ມີ 685 ແຫ່ງ , 2000 ມີ 758 ແຫ່ງ, 2005 ມີ 969 ແຫ່ງ, 2010 ມີ 1.284 ແຫ່ງ, ປີ 2015 ມີ 2.806 ແຫ່ງ, ປີ 2020 ມີ 3.496 ແຫ່ງ ແລະ ມີນັກຮຽນ 245.849 ຄົນ.

ຈຳນວນ ໂຮງຮຽນສາມັນສຶກສາ ໃນປີ 1990 ມີ 7,117 ແຫ່ງ 1995 ມີ 8,425 ແຫ່ງ, 2000 ມີ 10,696 ແຫ່ງ, 2005 ມີ 9,245 ແຫ່ງ, 2010 ມີ 10, 204 ແຫ່ງ, ປີ 2015 ມີ 10.547 ແຫ່ງ ແລະ ປີ 2020 ມີ 10.639 ແຫ່ງ, ມີນັກຮຽນ 1.395.280 ຄົນ.

ອະຊີວະສຶກສາ ແລະ ສູນອົບຮົມວິຊາຊີບ: ປີ 2019 ມີໂຮງຮຽນອະຊີວະສຶກສາ 106 ແຫ່ງ, ມີນັກຮຽນ 741.563 ຄົນ. ມີໂຮງຮຽນວິຊາຊີບ 101 ແຫ່ງ ໃນນັ້ນພາກເອກະຊົນມີ 73 ແຫ່ງ ມີ 4 ລະບົບຄື: ຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ ແລະ ເຊື່ອມຕໍ່ປະລິນຍາຕີ.

ການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລ: ສົກປີ 2018 - 2019 ທົ່ວປະເທດມີ ມະຫາວິທະຍາ ໄລທັງໝົດ 5 ແຫ່ງ, ໃນນັ້ນ 4 ແຫ່ງຂຶ້ນກັບກະຊວງສຶກສາທິການ, 1 ແຫ່ງຂຶ້ນກັບກະຊວງສາທາລະນະສຸກ; ໂຮງຮຽນວິທະຍາໄລມີ 133 ແຫ່ງ, ໂຮງຮຽນສ້າງຄູມີ 12 ແຫ່ງ ນັບທັງຄະນະສຶກສາສາດ ຂອງມະຫາວິທະ ຍາໄລແຫ່ງຊາດ.

**+ ດ້ານກິລາ - ກາຍະກຳ:** ມີການຂະຫຍາຍຕົວຢ່າງກວ້າງຂວາງນັບແຕ່ສູນກາງເຖິງທ້ອງຖິ່ນ ແລະ ມີປວງຊົນເຂົ້າຮ່ວມໃນວຽກງານດັ່ງກ່າວນັບມື້ຫລາຍຂຶ້ນ ປະກອບສ່ວນເຮັດໃຫ້ບົດບາດຂອງ ສປປ ລາວ ສູງຂຶ້ນ ໃນເວທີພາກພື້ນ ແລະ ສາກົນ. ປັດຈຸບັນໃນທົ່ວປະເທດພວກເຮົາມີສະໜາມກິລາທີ່ໄດ້ມາດຕະຖານລະດັບຊາດ 4 ແຫ່ງ, ມາດຕະຖານລະດັບແຂວງ 10 ແຫ່ງ; ມີສະຫະພັນກິລາແຫ່ງຊາດທັງໝົດ 39 ສະຫະ ພັນ ແລະ 1 ສະມາຄົມກິລາຄົນພິການ. ພວກເຮົາມີຜົນສຳເລັດຫຼາຍປະການໃນວຽກງານກິລາ - ກາຍະກຳອັນພົ້ນເດັ່ນແມ່ນການປັບປຸງ - ກໍ່ສ້າງສະໜາມກິລາ, ປັບປຸງສູນຝຶກ ແລະ ໂຮງຮຽນກິລາ- ກາຍະກຳ, ການອອກແບບສະໜາມກິລາຕາມມາດຕະຖານ, ການຝຶກແບບ - ສ້າງນັກກິລາ, ການແຂ່ງຂັນກິລາປະເພດຕ່າງໆນັບທັງພາຍໃນ ແລະ ຕ່າງປະເທດ. ພິເສດ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດງານແຂ່ງຂັນກິລາຊີເກມຄັ້ງທີ 25 ປີ 2009 ຊຶ່ງຍາດໄດ້ 33 ຫຼຽນຄຳ ເປັນຄັ້ງປະຫວັດສາດຂອງວົງການກິລາຊາດລາວ, ເປັນເຈົ້າພາບຈັດການງານແຂ່ງຂັນກິລາມະຫາວິທະຍາໄລອາຊຽນຄັ້ງທີ 16 ແລະ ງານແຂ່ງຂັນອື່ນໆ ແລະ ໄດ້ເຂົ້າຮ່ວມງານແຂ່ງຂັນກິລາໃນລະດັບປະເທດ, ລະດັບພາກພື້ນ ແລະ ສາກົນນັບມື້ຫລາຍຂຶ້ນ.

**(2) ວຽກງານສາທາລະນະສຸກ.**

ພັກ ແລະ ລັດຖະບານ ໄດ້ເອົາໃຈໃສ່ຫັນເອົາວຽກງານສາທາລະນະສຸກໄປສູ່ຮາກຖານປະຊາຊົນ, ຖືເອົາການກັນພະຍາດສົ່ງເສີມສຸຂະພາບເປັນຕົ້ນຕໍ ແລະ ຖືເອົາການປິ່ນປົວທີ່ມີຄຸນນະພາບ ແລະ ສະໜອງການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງເປັນສຳຄັນ, ປະຕິບັດລະບອບປິ່ນປົວບໍ່ເສຍຄ່າຕໍ່ເປົ້າໝາຍທີ່ທຸກຍາກຂາດເຂີນ ແລະ ດ້ອຍໂອກາດ ຕາໜ່າງສາທາລະນະສຸກ ໄດ້ຂະຫຍາຍຕົວໄປເຖິງກຸ່ມບ້ານ. ຄຸນນະພາບຂອງການບໍລິການສາທາລະນະສຸກ ຂອງ ສປປ ລາວ ໄດ້ມີການປັບປຸງ ແລະ ພັດທະນາ ໃນແຕ່ລະຂັ້ນດີຂຶ້ນກວ່າເກົ່າ.

ໃນໄລຍະປີ 1986-1990 ໄດ້ສຸມໃສ່ພັດທະນາພື້ນຖານໂຄງລ່າງຂັ້ນສູນກາງເປັນຕົ້ນຕໍ ໄດ້ເຮັດໃຫ້ຈຳນວນໂຮງໝໍຂັ້ນສູນກາງ ເພີ່ມຂຶ້ນຈາກ 4 ແຫ່ງ ໃນປີ 1985 ມາເປັນ 8 ແຫ່ງ ໃນປີ 1990, ປີ 2000 ມີໂຮງໝໍ 141 ແຫ່ງ ເພີ່ມຂຶ້ນ 1,3 ເທື່ອ, ມີສຸກສາລາ 533 ແຫ່ງ ເພີ່ມຂຶ້ນ 4,8 ເທື່ອ ທຽບໃສ່ ປີ 1976, ປີ 2010 ມີໂຮງໝໍ 147 ແຫ່ງ, ສຸກສາລາ ມີ 862 ແຫ່ງ, ປີ 2015 ມີໂຮງໝໍສູນກາງ 5 ແຫ່ງ, ແຂວງ 17 ແຫ່ງ, ເມືອງ 1148 ແຫ່ງ ແລະ ສຸກສາລາ 959 ແຫ່ງ, ໃນປີ 2021 ທົ່ວປະເທດມີ ສຸກສາລາ 1.223 ແຫ່ງ, ມີໂຮງໝໍເມືອງ 135 ແຫ່ງ, ໂຮງໝໍແຂວງ 18 ແຫ່ງ, ໂຮງໝໍສູນກາງ 8 ແຫ່ງ ແລະ ສູນບໍລິການປິ່ນປົວສະເພາະ 7 ແຫ່ງ (ສູນການແພດຟື້ນຟູໜ້າທີ່ການ, ໄຂ້ຍຸງ, ຕາ, ວັນນະໂລກ, ວິເຄາະ ແລະ ລະບາດວິທະຍາ, ຜິວໜັງ, ເອສ ແລະ ອື່ນໆ); ມີບ້ານສາທາລະນະສຸກ 6.421 ບ້ານ, ປະຊາຊົນສາມາດເຂົ້າເຖິງການບໍລິການ ດ້ານສາທາລະນະສຸກ ໃນຂອບເຂດທົ່ວປະເທດ; ປະຊາຊົນຊົມໃຊ້ນ້ຳສະອາດ 85,87% ແລະ ການຊົມໃຊ້ວິດຖ່າຍຄົວເຮືອນ 75,9%; ໄດ້ປະກາດບ້ານຢຸດຕິການຖ່າຍຊະຊາຍ 52% ຂອງບ້ານເປົ້າໝາຍ (2,232 ບ້ານ). ໄດ້ສ້າງບ້ານສາທາລະນະສຸກແບບຢ່າງເພີ່ມກວມເອົາ 77,41% ຂອງຈຳນວນບ້ານທັງໝົດ; ອາຍຸຍືນສະເລ່ຍຂອງພົນລະເມືອງລາວແມ່ນ 65 ປີ, ແມ່ຍິງປະມານ 66,7 ປີ, ຜູ້ຊາຍປະມານ 64 ປີ.

ໃນຕົ້ນປີ 2020 ຜ່ານມານີ້, ຂະແໜງສາທາລະນະສຸກ ໄດ້ຮັບມືກັບການລະບາດຂອງພະຍາດໂຄວິດ-19 ໄດ້ດີສົມຄວນ ຊຶ່ງເປັນທັງສິ່ງທ້າທາຍ ແລະ ກາລະໂອກາດ ໃນການປັບປຸງຄວາມສາມາດຂອງການໃຫ້ບໍລິການ ເປັນຕົ້ນ ການບົ່ງມະຕິພະຍາດ ແລະ ປິ່ນປົວພະຍາດນີ້.

ໃນ **2021** ວຽກງານສາທາລະນະສຸກ ສຸມໃສ່ຈັດຕັ້ງປະຕິບັດການໃຫ້ບໍລິການສັກວັກຊີນກັນພະຍາດໂຄວິດ-19 ເຂັມທີ1 ໄດ້ 3.286.024 ໂດສ ເທົ່າກັບ 44,78% ຂອງປະຊາກອນທັງໝົດ (7.337.777 ຄົນ); ເຂັມທີ 2 ແມ່ນໄດ້ 2.815.948 ໂດສ ເທົ່າກັບ 38,38% ແລະ ມີແຜນຂະຫຍາຍການສັກວັກຊີນໃຫ້ກຸ່ມອາຍຸ 9-11 ປີ ແລະ 12-17 ປີ, ຄາດໝາຍປີ 2021 ໃຫບັນລຸຫລາຍກວ່າ 50% ຂອງປະຊາກອນໃນທົ່ວປະເທດ ນອກຈາກນີ້ ຕົວເລກສະສົມຂອງພະຍາດໄຂ້ຍຸງລາຍທົ່ວປະເທດມີ ທັງໝົດ 850 ກໍລະນີ ແລະ ບໍ່ມີກໍລະນີເສຍຊີວິດ.

ສະນັ້ນ, ຈຶ່ງສາມາດຕີລາຄາໄດ້ວ່າ ການບໍລິການສາທາລະນະສຸກ ໄດ້ມີການປັບປຸງຢ່າງເປັນລະບົບ ແລະ ທົ່ວເຖິງ ເຮັດໃຫ້ປະຊາຊົນບັນດາເຜົ່າໃນທົ່ວປະເທດ ໄດ້ເຂົ້າເຖິງການບໍລິການທີ່ມີຄຸນນະພາບ ນັບມື້ເພີ່ມຂຶ້ນ ໃນລະດັບມາດຕະຖານຂັ້ນພື້ນຖານ ຂອງການຫັນເປັນທັນສະໄໝ ຫຍັບຫມໍ່ເຂົ້າໃນລະດັບພາກພື້ນ ແລະ ສາກົນ ເທື່ອລະກ້າວ.

ກອງທຶນປະກັນສຸຂະພາບແຫ່ງຊາດ ຂະຫຍາຍກວມເອົາ 17 ແຂວງ, ເທົ່າກັບ 71% ຂອງປະຊາກອນຖ້າລວມທັງ ອປສ ແລະ ອປລ ແມ່ນກວມຮອດ 94%, ຊຶ່ງເຫັນວ່າຕາໜ່າງບໍລິການສາທາລະນະສຸກໄດ້ມີການຂະຫຍາຍປົກຄຸມເພີ່ມຂຶ້ນ.

**(3) ວຽກງານຖະແຫລງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ.**

**+ ຖະແຫລງຂ່າວ:** ສື່ມວນຊົນເປັນເຄື່ອງມືອັນແຫຼມຄົມຂອງພັກ ແລະ ລັດ, ເປັນເວທີຂອງມະຫາຊົນ, ເປັນສາຍໄຍຜູກພັນມະຫາຊົນກັບພັກ. ຍ້ອນວ່າວຽກງານຖະແຫຼງຂ່າວເປັນວຽກໜຶ່ງທີ່ສຳຄັນ. ສະນັ້ນ, ພັກ ແລະ ລັດຖະບານ ຈຶ່ງໄດ້ເອົາໃຈໃສ່ຊີ້ນຳ - ນຳພາ ເປັນແຕ່ລະໄລຍະຢ່າງເປັນປົກກະຕິ, ເຮັດໃຫ້ວຽກງານດັ່ງກ່າວຂະຫຍາຍຕົວທັງດ້ານຈຳນວນ ແລະ ຄຸນນະພາບ ເຊິ່ງສະແດງອອກໃນຜົນສຳເລັດຂອງແຕ່ລະຂະແໜງວຽກດັ່ງນີ້:

ປີ 1975 ມີສື່ສິ່ງພິມທັງໝົດ ພຽງແຕ່ 5 ສະບັບ, ຮອດປີ 2019 ມີ; ວາລະສານ ທັງໝົດ 133 ສະບັບ, ໃນນັ້ນ ໜັງສືພິມ 27 ສະບັບ; ວາລະສານ 102 ສະບັບ ແລະ ໃບຂ່າວ 4 ສະບັບ.

ດ້ານເນື້ອໃນຂອງສື່ສິ່ງພິມ ກໍຮັບການປັບປຸງໃຫ້ດີຂຶ້ນ ເປັນຕົ້ນແມ່ນ ບົດຄວາມ, ບົດເລື່ອງ, ບົດຂ່າວຕ່າງໆກໍມີລັກສະນະຕົວຈິງ ແລະ ທັນກັບສະພາບການ, ທັງມີຄຸນປະໂຫຍດໃນການສຶກສາອົບຮົມ, ແນະນຳທາງດ້ານທາງສຽງກະແສແນວຄິດ ມີລັກສະນະແຫຼມຄົມ, ທັງເດັດດ່ຽວຕໍ່ສູ້ຕ້ານ ການບິດເບືອນ, ໃສ່ຮ້າຍປ້າຍສີຂອງພວກຄົນບໍ່ດີ ທັງພາຍໃນ ແລະ ຕ່າງປະເທດ.

ວິທະຍຸກະຈາຍສຽງ ປີ 1975 ມີສະຖານີວິທະຍຸກະຈາຍສຽງ 8 ສະຖານີ. ປີ 2019 ທົ່ວປະເທດມີສະຖານີວິທະຍຸທັງໝົດ 76 ສະຖານີ ຊຶ່ງແຜ່ກະແສຄື້ນກວມເອົາ 95% ຂອງພື້ນທີ່ທົ່ວປະເທດ.

ໂທລະພາບ ສະຖານີໂທລະພາບແຫ່ງຊາດລາວ ໄດ້ຮັບການສ້າງຕັ້ງຂຶ້ນ ວັນທີ 1 ທັນວາ 1983. ປີ 2019 ມີສະຖານີໂທລະພາບທັງໝົດ 42 ສະຖານີ, ແຜ່ກະແສຄື້ນກວມເອົາ 85% ຂອງພື້ນທີ່ທົ່ວປະເທດ.

**+ ວັດທະນະທຳ:** ພັກ ແລະ ລັດຖະບານໄດ້ເອົາໃຈໃສ່ຊີ້ນຳ - ນຳພາວຽກງານວັດທະນະທຳຢ່າງຮອບດ້ານ, ພັກໄດ້ມີທັດສະນະວ່າ: " ວັດທະນະທຳເປັນພື້ນຖານແຫ່ງຄວາມຍືນຍົງຄົງຕົວຂອງຊາດ, ເປັນກຳລັງດັນໃຫ້ສັງຄົມຂະຫຍາຍຕົວ ແລະ ເປັນຈຸດໝາຍຂອງການພັດທະນາສັງຄົມ ". ຈາກທັດສະນະດັ່ງກ່າວ, ເລີ່ມແຕ່ໄລຍະຕົ້ນຂອງການປະຕິວັດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ພັກໄດ້ນຳພາປວງຊົນລາວທັງຊາດ ຟື້ນຟູ ແລະ ກໍ່ສ້າງວັດທະນະທຳແຫ່ງຊາດ, ຕີຖອຍ ແລະ ລຶບລ້າງຮ່ອງຮອຍວັດທະນະທຳທີ່ເສື່ອມຊາມຊອດກະຈາຂອງລະບອບລ່າເມືອງຂຶ້ນ, ປຸກລະດົມຊຸກຍູ້ ແລະ ສົ່ງເສີມຂະບວນວັດ

ທະ ນະທຳ, ສິລະປະວັນນະກຳທີ່ມີລັກສະນະຊາດ, ກ້າວໜ້າ ແລະ ລັກສະນະມະຫາຊົນ ໃຫ້ກາຍເປັນພື້ນຖານວັດທະນະທຳຂອງລະບອບໃໝ່.

ປີ **2021** ໃນທົ່ວປະເທດມີຄອບຄົວວັດທະນະທຳ 963.543 ຄອບຄົວ ແລະ ປີ 2021 ເພີ້ມຂຶ້ນ 6.345 ຄອບຄົວ ເທົ່າກັບ 105% ຂອງຄອບຄົວທົ່ວປະເທດ, ບ້ານວັດທະນະທຳ ເພີ້ມຂຶ້ນ 80 ບ້ານ ເທົ່າກັບ 53,33% ລວມ 6.455 ບ້ານ ຂອງບ້ານຂອບເຂດທົ່ວປະເທດ.

**+ ການທ່ອງທ່ຽວ:** ການທ່ອງທ່ຽວ ເປັນທ່າແຮງອັນສຳຄັນໃນການສ້າງລາຍຮັບເຂົ້າງົບປະມານ. ລັດຖະບານໄດ້ກຳນົດການພັດທະນາການທ່ອງທ່ຽວເຂົ້າໃນ 8 ແຜນງານບູລິມະສິດ ເພື່ອພັດທະນາເສດຖະ ກິດ - ສັງຄົມໃຫ້ມີບາດກ້າວຂະຫຍາຍຕົວຂຶ້ນ. ນັບແຕ່ປີ 1989 ເປັນຕົ້ນມາ ພັກ ແລະ ລັດໄດ້ສົ່ງເສີມການທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວແຫ່ງຕ່າງໆໄດ້ຮັບການພັດທະນາສາມາດດຶງດູດເອົານັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ອງທ່ຽວສະຖານທີ່ຕ່າງໆນັບມື້ນັບຫລາຍຂຶ້ນ. ປີ 2012 ປະເທດເຮົາ ໄດ້ເປີດປີທ່ອງທ່ຽວລາວ ແລະ ເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ແລະ ງານວາງ ສະແດງການທ່ອງທ່ຽວອາຊຽນ ປີ 2013 ແລະ ອື່ນໆ. ດ້ວຍຜົນສຳເລັດຫຼາຍດ້ານໂດຍສະເພາະດ້ານການບໍລິການ, ການອະນຸລັກ, ການຮັກສາສະພາບສິ່ງແວດລ້ອມທາງດ້ານວັດທະນະທຳ ແລະ ທຳມະຊາດ, ເຮັດໃຫ້ ສປປ ລາວ ໄດ້ຮັບລາງວັນດີເດັ່ນ " ເປັນປະເທດທີ່ໜ້າທ່ອງທ່ຽວທີ່ສຸດໃນໂລກສຳລັບປີ 2013 " ຈາກສະພາການທ່ອງທ່ຽວ ແລະ ການຄ້າ ປີ 2019 ມີນັກທ່ອງທ່ຽວເຂົ້າມາລາວທັງໝົດ ປະມານ 4,1 ລ້ານເທື່ອ ສ້າງລາຍຮັບຈາກການທ່ອງທ່ຽວໄດ້ກວ່າ 700 ລ້ານໂດລາ, ຍ້ອນວ່າໄດ້ເປີດປີທ່ອງທ່ຽວ ລາວ-ຈີນ ຈຶ່ງເຮັດໃຫ້ມີນັກທ່ອງທ່ຽວເຂົ້າມາລາວເພີ່ມຂຶ້ນອີກ ຄາດວ່າຈະມີນັກທອງທ່ຽວເຂົ້າມາລາວເພີ່ມຂຶ້ນອີກ, ພາຍຫລັງທີ່ສຽງແຄນລາວໄດ້ເປັນມໍລະດົກໂລກທາງດ້ານວັດທະນະທຳນາມມະທຳ ແລະ ມີທົ່ງໄຫຫີນ ເຂົ້າເປັນມໍລະດົກໂລກ;ສົມທົບກັບອົງການ ອຸຍແນສໂກ ແລະ ຊ່ຽວຊານ ສສ ຫວຽດນາມ ເພື່ອສະເໜີເອົາປ່າສະຫງວນແຫ່ງຊາດ ພູຫີນໜາມໜໍ່ ຢູ່ເມືອງບົວລະພາ ແຂວງຄຳມ່ວນ ເຂົ້າເປັນມໍລະດົກໂລກ ທາງດ້ານທຳມະຊາດ ແຫ່ງທຳອິດ ຂອງ ສປປ ລາວ, ທັງເປັນມໍລະດົກຂ້າມຊາຍແດນກັບມໍລະດົກໂລກ ຟອງຍາແກບາງ ແຂວງກວາງບິງ ຂອງ ສສ ຫວຽດນາມ ຕື່ມອີກ.

ພາຍໃນຕົ້ນປີ ຄຽງຄູ່ກັນນັ້ນ ກໍໄດ້ສືບຕໍ່ຂໍຂຶ້ນທະບຽນ ກ່ຽວກັບລຳວົງລາວ ແລະ ລາຍນາກສິ້ນໄໝລາວ ຕໍ່ອົງການອຸຍແນສໂກ ເພື່ອຈົດທະບຽນເປັນມໍລະດົກໂລກ. ນອກນັ້ນ ວຽກງານຟື້ນຟູສິລະປະວັດຈິດສິນພື້ນເມືອງ, ການຂຸດຄົ້ນ-ສຳຫຼວດແຫຼ່ງບູຮານວິທະຍາ, ການຂຶ້ນທະບຽນບັນຊີວັດຖຸບູຮານ ແລະ ອື່ນໆ ກໍມີຄວາມຄືບໜ້າເປັນກ້າວໆ. ໃນປີ **2021** ການທ່ອງທ່ຽວພົບຄວາມຫຍຸ້ງຍາກ ຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19 ຮອບໃໝ່ ເຮັດໃຫ້ນັກທ່ອງທ່ຽວໄດ້ຮັບຜົນກະທົບຢ່າງໜັກ ແລະ ບໍ່ສາມາດດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາປະເທດໄດ້ຕາມແຜນທີ່ວາງໄວ້.

**(4) ວຽກງານແຮງງານ - ສະຫວັດດີການສັງຄົມ.**

ໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ລັດຖະບານໄດ້ເພີ່ມຄ່າແຮງງານຂຶ້ນໃຫ້ຜູ້ອອກແຮງງານ ໃຫ້ຖືກກັບສະພາບການພັດທະນາເສດຖະກິດ - ສັງຄົມໃນແຕ່ລະໄລຍະ, ເອົາໃຈໃສ່ສ້າງບັນດານິຕິກຳເປັນຕົ້ນ ກົດໝາຍວ່າດ້ວຍປະກັນສັງຄົມ, ດຳລັດວ່າດ້ວຍການສ້າງ ແລະ ພັດທະນາສີມືແຮງງານ, ດຳລັດວ່າດ້ວຍການສົງເຄາະ, ດຳລັດວ່າດ້ວຍກອງທຶນປະກັນ ແລະ ຄຸ້ມຄອງໄພພິບັດ, ປັບປຸງດຳລັດວ່າດ້ວຍການປົກປ້ອງ ແລະ ສິດຜົນປະໂຫຍດຂອງຄົນພິການ, ກົດໝາຍວ່າດ້ວຍການຄຸ້ມຄອງແຮງງານ, ກົດໝາຍວ່າດ້ວຍການຈັດຫາງານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ. ໄດ້ປັບປຸງ ແລະ ກໍ່ສ້າງສູນພັດທະ ນາສີມືແຮງງານ ໃນຂອບເຂດທົ່ວປະເທດ ເພື່ອຕອບສະໜອງແຮງງານທີ່ມີມາດຕະຖານໃຫ້ແກ່

ສັງຄົມ ແລະ ສາມາດຍາດໄດ້ຜົນງານທີ່ມີລັກສະນະຂະຫຍາຍເປັນກ້າວໆ ທົ່ວປະເທດມີສູນພັດທະນາສີມືແຮງງານ ແລະ ສູນວິຊາຊີບທັງໝົດ 153 ກວ່າແຫ່ງ ຊຶ່ງສາມາດຝຶກວິຊາຊີບໄດ້ຫຼາຍໝື່ນຄົນ, ຮອດປີ 2020 ສາມາດພັດທະນາສີມືແຮງງານໄດ້ທັງໝົດ 409.107 ຄົນ, ຍິງ 19.793 ຄົນ ເທົ່າກັບ 62,17%, ສະໜອງແຮງງານເຂົ້າສູ່ຕະຫຼາດແຮງງານຢູ່ພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 553.674 ຄົນ, ຍິງ 240.749 ຄົນ ເທົ່າກັບ 77,31%, ໃນນີ້ສະໜອງຢູ່ພາຍໃນ 246.115 ຄົນ, ຍິງ 80.595 ຄົນ ແລະ ຈັດສົ່ງໄປເຮັດວຽກຢູ່ຕ່າງປະເທດ ລວມທັງປັບສະຖານະພາບແຮງງານລາວ ຢູ່ໄທ ໄດ້ 307.559 ຄົນ, ຍິງ 160.154 ຄົນ.

ໃນປີ **2021** ການຝຶກສີມືແຮງງານໄດ້ທັງໝົດ 12.305 ຄົນ ລື່ນແຜນ 53,8 1%, ສາມາດສະໜອງແຮງງານເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 7.167 ຄົນ ເທົ່າກັບ 25,59% ຂອງແຜນການ, ຂະຫຍາຍອັດຕາປົກຄຸມປະກັນສັງຄົມໄດ້ 27.907 ຄົນ, ເທົ່າກັບ 89% ໃນນີ້: ພາກລັດໄດ້ 2.450 ຄົນ, ລື່ນແຜນ 63%, ພາກວິສາຫະກິດໄດ້ 22.430 ຄົນ, ເທົ່າກັບ 83% ຂອງແຜນ(ມະຕິສະພາ 27.000 ຄົນ) ແລະ ມີຜູ້ສະໝັກໃຈ 3.027 ຄົນ ລື່ນແຜນ 1%, ສັງລວມຂໍ້ມູນແຮງງານທີ່ກັບຈາກຕ່າງປະເທດທີ່ວ່າງງານ ແລະ ຜູ້ວ່າງງານພາຍໃນ ທັງໝົດ 496.000 ຄົນ, ເທົ່າກັບ 21,8%,ໃນນີ້: ກັບມາຈາກຕ່າງປະເທດ 56.918 ຄົນ ແລະ ວ່າງງານພາຍໃນ 496.000 ຄົນ, ປະຕິບັດນະໂຍບາຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໄດ້ 692 ທ່ານ ເທົ່າກັບ 22,7% ຂອງແຜນການ, ເປັນເງິນ 15.26 ຕື້ກີບ ເທົ່າກັບ 19,51% ຂອງແຜນການ(ມະຕິສະພາ 5 ເປົ້າໝາຍບູລິມາສິດ3.043 ທ່ານ ເປັນເງິນ 78,20 ຕື້ກີບ), ເກັບກູ້ລະເບີດບໍ່ທັນແຕກອອກຈາກ ເນື້ອທີ່ການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມເສດຖະກິດ ໄດ້ປະມານ 1,699,21 ເຮັກຕາ ເທົ່າກັບ 26,7%, ແລະ ມີຜູ້ໄດ້ຮັບເຄາະຮ້າຍຈາກອຸບັດເຫດລະເບີດບໍ່ທັນແຕກຕົກຄ້າງ ຈຳນວນ 25 ຄົນ ແລະ ສາມາດລະດົມ ແລະ ຮັບບໍລິຈາກເລືອດ ໄດ້ປະມານ 44.157 ຖົງ ເທົ່າກັບ 68,56%. ນອກຈາກນີ້, ໄດ້ປະຕິບັດນະໂຍບາຍອຸດໜູນວ່າງງານຕໍ່ຜູ້ປະກັນຕົນທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ໃນ 9 ເດືອນປີ 2021, ມີ 719 ບໍລິສັດ/ຫົວໜ່ວຍແຮງງານມີຜູ້ປະກັນຕົນໄດ້ຮັບນະໂຍບາຍ 36.025 ເທື່ອຄົນ ເປັນເງິນ ທັງໝົດ 28.930 ລ້ານກີບ. ມາຮອດປະຈຸບັນ, ໄດ້ປະຕິບັດນະໂຍບາຍອຸດໜູນວ່າງງານສະເພາະໂຄວິດ-19 ທັງໝົດ 867 ບໍລິສັດ/ຫົວໜ່ວຍແຮງງານ, ມີຜູ້ອອກແຮງງານ 48.966 ເທື່ອຄົນ, ເປັນເງິນທັງໝົດ 42.187 ລ້ານກີບ.

**(5) ວຽກງານນິຕິບັນຍັດ.**

ສະພາແຫ່ງຊາດເປັນອົງການສູງສຸດແຫ່ງອຳນາດລັດ, ເປັນອົງການນິຕິບັນຍັດປະຕິບັດປົດບາດໜ້າທີ່ຮັບຮອງເອົາລັດຖະທຳມະນູນ ແລະ ກົດໝາຍ, ຕົກລົງບັນຫາພື້ນຖານສຳຄັນຂອງປະເທດຊາດ, ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງອົງການລັດ. ນັບແຕ່ມື້ສ້າງຕັ້ງສະພາປະຊາຊົນສູງສຸດໃນວັນທີ 2 ທັນວາ ປີ 1975 ໃນເມື່ອກ່ອນ ກໍຄືສະພາແຫ່ງຊາດໃນປັດຈຸບັນ, ສະພາແຫ່ງຊາດ ຊຸດທີ IX ປະກອບມີສະມາຊິກສະພາຊາດແຫ່ງຊາດ 164 ສະຫາຍ, ຍິງ 36 ສະຫາຍ, ສະມາຊິກພາປະຊາຊົນແຂວງ ຊຸດທີ II, ປະກອບມີສະມາຊິກສະພາ 492 ສະຫາຍ, ຍິງ 150 ສະຫາຍ.

ລະບົບການຈັດຕັ້ງໃນອຳນາດລັດໄດ້ຮັບການປັບປຸງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະເປັນຕົ້ນສະພາປະຊາຊົນນະຄອນຫຼວງວຽງຈັນ ແລະ ທ້ອງຖິ່ນ, ມີລັດຖະບານ, ອົງການປົກຄອງທ້ອງຖິ່ນແຂວງ ແລະ ເມືອງ ມີອົງການຕຸລາການຂັ້ນສູນກາງ, ຂັ້ນພາກ, ຂັ້ນແຂວງ ແລະ ເຂດ.

ການປະຕິບັດພາລະບົດບາດຄຸ້ມຄອງມະຫາພາກ, ທັນແນວທາງ, ນະໂຍບາຍຂອງພັກ - ລັດ ເປັນກົດໝາຍ, ເປັນລະບຽບການ, ເປັນນິຕິກຳ ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ - ສັງຄົມ ເຂົ້າສູ່ລະບຽບກົດໝາຍເທື່ອລະກ້າວ, ຮອດປີ 2020 ພວກເຮົາມີກົດໝາຍທີ່ປະກາດໃຊ້ທັງໝົດ 150 ກວ່າສະບັບ, ລັດຖະບັນຍັດ 40 ກວ່າສະບັບ, ດຳລັດ 160 ກວ່າສະບັບ ແລະ ນິຕິກຳອື່ນໆ 190 ກວ່າສະບັບ ການປະຕິບັດໜ້າຂອງອົງການປົກປ້ອງກົດໝາຍ ກໍຄືການເຄື່ອນໄຫວປະຕິບັດໜ້າທີ່ ແລະ ພັນທະຂອງພົນລະເມືອງ ລ້ວນແຕ່ຢູ່ບົນພື້ນຖານກົດລະບຽບທີ່ກ່ຽວຂ້ອງ.

**4). ວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ.**

ພາລະກິດການປົກປັກຮັກສາປະເທດຊາດ ແມ່ນໜຶ່ງໃນສອງໜ້າທີ່ຍຸດທະສາດສຳຄັນຂອງປະເທດພວກເຮົາ. ສະນັ້ນ ພັກເຮົາໄດ້ຊີ້ນຳ - ນຳພາໂດຍກົງ, ເດັດຂາດ ແລະ ຮອບດ້ານຕໍ່ກຳລັງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ; ບັນຫາທີ່ເປັນໃຈກາງຕົ້ນຕໍແມ່ນເອົາໃຈໃສ່ສຶກສາອົບຮົມໃຫ້ພະນັກງານ, ນັກຮົບມີຄວາມໜັກ ແໜ້ນທາງດ້ານການເມືອງ - ແນວຄິດ, ເຂັ້ມແຂງດ້ານການຈັດຕັ້ງ, ເປັນກຳລັງທີ່ຈົງຮັກພັກດີ, ບໍລິສຸດສັດຊື່ຕໍ່ຊາດ, ຕໍ່ພັກ, ຕໍ່ປະຊາຊົນ ແລະ ອຸດົມການສັງຄົມນິຍົມ, ສົມກັບເປັນເຄື່ອງມືອັນແຫຼມຄົມຂອງພັກ, ເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດກຳລັງປະກອບອາວຸດປະຊາຊົນເຮົາຢ່າງບໍ່ຢຸດຢັ້ງ, ຕັ້ງໜ້າອົບຮົມ, ຫັດແອບສິລະປະຍຸດ, ຍຸດທະວິທີ ໃຫ້ມີຄວາມຊຳນານ ຕິດພັນກັບການຍົກລະດັບຄວາມສາມາດບັນຊາສູ້ຮົບທີ່ມີແບບແຜນທັນສະໄໝເປັນກ້າວໆ ໂດຍສຸມໃສ່ສ້າງທັງ 3 ປະເພດກຳລັງໄປພ້ອມໆກັນ, ໃນນັ້ນຕ້ອງສ້າງກຳລັງຫຼວງໃຫ້ເປັນກຳລັງຫຼັກແຫຼ່ງທີ່ເຂັ້ມແຂງ ມີກຳລັງແຮງ ແລະ ຄວາມສາມາດສູ້ຮົບມີໄຊໃນທຸກສະຖາ ນະການ; ສ້າງກຳລັງທ້ອງຖິ່ນໃຫ້ເປັນຫົວໜ່ວຍສູ້ຮົບເຂັ້ມແຂງ ນອນຢູ່ໃນຍຸດທະສາດຂອງທ້ອງຖິ່ນ, ມີກຳລັງແຮງ ແລະ ມີຄວາມສາມາດປົກປັກຮັກສາທ້ອງຖິ່ນຂອງຕົນ; ສ້າງກຳລັງກອງຫຼອນ - ກຳລັງປ້ອງກັນຄວາມສະຫງົບບ້ານໃຫ້ມີຄວາມໜັກແໜ້ນ, ມີຄວາມສາມາດເຮັດໜ້າທີ່ເຄື່ອນໄຫວຮັກສາຄວາມສະຫງົບ, ຕອບຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆທັງໄດ້ສຸມໃສ່ຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍບັນຫາຢາເສບຕິດ ອອກເປັນນິຕິກຳ, ແຜນງານ ແລະ ແບ່ງຄວາມຮັບຜິດຊອບລະອຽດ ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດຢ່າງຈິງຈັງ ແຕ່ເດືອນສິງຫາ ປີ 2001 ເປັນຕົ້ນມາ ໄດ້ມີຄວາມຄືບໜ້າໃນຫຼາຍດ້ານ ເປັນຕົ້ນ: ທຳລາຍແຫຼ່ງການຜະລິດ, ເຄືອຂ່າຍການຂົນສົ່ງ ແລະ ຈຳໜ່າຍ ໄດ້ເປັນຈຳນວນຫຼວງຫຼາຍ.

**5). ວຽກງານການຕ່າງປະເທດ.**

ສປປ ລາວ ໄດ້ເປີດກວ້າງການພົວພັນກັບຕ່າງປະເທດ ແລະ ຮ່ວມມືສາກົນໂດຍຢຶດໝັ້ນແນວທາງການຕ່າງປະເທດ “ສັນຕິພາບ ເອກະລາດ ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍເປັນເຈົ້າການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການສ້າງປະຊາຄົມອາຊຽນ”; ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍລະດັບ ແລະ ຫຼາຍຮູບແບບ ບົນພື້ນຖານຫຼັກການເຄົາລົບຊຶ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.

ການເຄື່ອນໄຫວພົວພັນຢ່າງຕັ້ງໜ້າໃນຂອບການຮ່ວມມືຂອງອະນຸພາກພື້ນ, ພາກພື້ນແລະສາກົນ, ໃນປີ 1995 ສປປ ລາວ ໄດ້ຖືກເລືອກຕັ້ງໃຫ້ເປັນຮອງປະທານກອງປະຊຸມສະມັດຊາໃຫຍ່ອົງການສະຫະປະຊາຊາດ (ສປຊ) ຊຶ່ງເປັນກຽດອັນສູງສົ່ງສຳລັບ ສປປ ລາວ ເພາະມັນເປັນປີສະເຫຼີມສະຫຼອງ ສປຊ ຄົບຮອບ 50 ປີ ໃນທົ່ວໂລກ; ວັນທີ 23 / 7 / 1997 ສປປ ລາວ ໄດ້ເຂົ້າເປັນສະມາຊິກສົມບູນຂອງສະມາຄົມບັນດາປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ- ASEAN); ສປປ ລາວ ເປັນສະມາຊິກຂອງຂະບວນການບໍ່ຮ່ວມກຸ່ມ, ຂອງອົງການບັນດາປະເທດທີ່ໃຊ້ພາສາຝຣັ່ງ, ສະມາຊິກຂອງ

ກອງທຶນການເງິນລະຫວ່າງປະເທດ ( IMF ), ສະມາຊິກຂອງທະນາຄານພັດທະນາແຫ່ງເອເຊຍ (ADB), ເປັນສະມາຊິກແຫ່ງສົນທິສັນຍາກ່ຽວກັບບັນຫາຢາເສບຕິດ, ສິ່ງແວດລ້ອມ ແລະ ສົນທິສັນຍາສາກົນອື່ນໆ; ເຂົ້າຮ່ວມໃນລັດຖະສະພາສາກົນ ( IPO ); 26 /10/ 2013 ສປປ ລາວ ໄດ້ເຂົ້າເປັນສະມາຊິກອົງການການຄ້າໂລກ( WTO ).

ປັດຈຸບັນ ສປປ ລາວ ມີການພົວພັນການທູດກັບ 141 ປະເທດ, ມີສຳນັກງານຜູ້ຕາງໜ້າການທູດຂອງ ສປປ ລາວ ຢູ່ຕ່າງປະເທດ 40 ແຫ່ງ, ໃນນັ້ນ ມີສະຖານເອກອັກຄະລັດຖະທູດ 27 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ, ສະຖານກົງສຸນໃຫຍ່ 10 ແຫ່ງ, ຫ້ອງການກົງສູນ 1 ແຫ່ງ, ກົງສູນກິຕິມະສັກຂອງ ສປປ ລາວ ຢູ່ຕ່າງປະເທດ 12 ແຫ່ງ, ກົງສູນກິຕິມະສັກຂອງຕ່າງປະເທດຢູ່ ສປປ ລາວ 18 ແຫ່ງ, ມີດ່ານສາກົນ 28 ແຫ່ງ, ໄດ້ສ້າງຕັ້ງສະມາຄົມມິດຕະພາບກັບ 18 ປະເທດ, ໄດ້ເຊັນສັນຍາຍົກເວັ້ນວີຊາກັບ 37 ປະເທດ, ສຳລັບຜູ້ຖືໜັງສືຜ່ານແດນການທູດ ແລະ ລັດຖະການ, ຍົກເວັ້ນວີຊາສອງຝ່າຍສຳລັບຜູ້ຖືໜັງສືຜ່ານແດນທຳມະດາກັບ 11 ປະເທດ, ໃນນັ້ນມີ 9 ປະເທດສະມາຊິກອາຊຽນ, ລັດເຊຍ ແລະ ມົງໂກລີ. ຍົກເວັ້ນວີຊາຝ່າຍດຽວສຳລັບຜູ້ຖືໜັງສືຜ່ານແດນທຳມະດາກັບ 8 ປະເທດຄື: ສ. ເກົາຫຼີ, ຍີ່ປຸ່ນ, ສະຫະພັນສະວິດ, ລຸກຊຳບວກ, ດານມາກ, ສະວີເດັນ, ຟິນແລນ ແລະ ນອກແວ. ມີການພົວພັນກັບພັກການເມືອງຫຼາຍກວ່າ 140 ພັກ ແລະ ມີການພົວພັນດ້ານເສດຖະກິດ ຫຼາຍກວ່າ 50 ປະເທດ; ການເຄື່ອນໄຫວວຽກງານການທູດລາວໃນໄລຍະ 46 ປີ ຜ່ານມາແມ່ນມີຜົນສຳເລັດອັນໃຫຍ່ຫຼວງເມື່ອທຽບກັບປີ 1975 ສປປ ລາວ ມີສາຍພົວພັນການທູດພຽງແຕ່ 44 ປະເທດ, ຍ້ອນມີການພົວພັນຮ່ວມມືດັ່ງກ່າວ ຈຶ່ງເຮັດໃຫ້ ສປປ ລາວ ມີບົດບາດພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ການພົວພັນລາວ - ຫວຽດນາມ ໄດ້ສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານຢູ່ໃນລະດັບສູງສຸດ ໂດຍການນຳພັກ-ລັດ ຂັ້ນສູງສຸດຂອງສອງປະເທດ ໄດ້ໄປມາຫາສູ່ກັນຢ່າງເປັນປົກກະຕິ ຊຶ່ງປະກອບມີເລຂາທິການໃຫຍ່, ປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ການນຳລະດັບຕ່າງໆ.

ການພົວພັນ ສປປ ລາວ - ສປ ຈີນ ມີມູນເຊື້ອມິດຕະພາບອັນດີງາມມາແຕ່ບູຮານນະການ, ສອງພັກ - ລັດ ເລີ່ມມີການພົວພັນກັນມາແຕ່ປີ 1959 ແລະ ສ້າງຕັ້ງສາຍພົວພັນການທູດໃນປີ 1961 ແລະ ໄດ້ຮັບການຊຸກຍູ້ສົ່ງເສີມ, ຍົກລະດັບການພົວພັນຢ່າງຕໍ່ເນື່ອງນັບມື້ນັບເຂົ້າສູ່ລວງເລິກ, ສະແດງອອກໃນປີ 2000, 2009, 2016, 2017, 2018 ແລະ ປີ 2019 ການນຳຂອງສອງພັກລາວ-ຈີນ ໄດ້ກຳນົດການພົວພັນລະຫວ່າງສອງປະເທດ ຕາມທິດ "ໝັ້ນຄົງຍາວນານ, ບ້ານໃກ້ເຮືອນຄຽງທີ່ດີ, ໄວ້ເນື້ອເຊື່ອໃຈກັນ, ຮ່ວມມືຮອບດ້ານ"; ການພົວພັນລະຫວ່າງສອງປະເທດ ໄດ້ຍົກລະດັບຂຶ້ນເປັນ "ຄູ່ຮ່ວມມືຍຸດທະສາດຮອບດ້ານ"; ການນຳສອງພັກລາວ - ຈີນ ໄດ້ຕີລາຄາ ແລະ ສະເໜີວ່າ "ການພົວພັນລາວ - ຈີນ ບໍ່ແມ່ນການພົວພັນທົ່ວໄປ ແຕ່ເປັນການພົວພັນຄູ່ຮ່ວມຊາຕາກຳ ທີ່ມີຄວາມໝາຍຍຸດທະສາດ"; ຍັງໄດ້ລະບຸເຂົ້າໃນຖະແຫຼງການຮ່ວມລາວ - ຈີນ ຄັ້ງທຳອິດວ່າ "ສອງປະເທດເປັນຄູ່ຮ່ວມຊາຕາກຳ ທີ່ມີຄວາມໝາຍຍຸດທະສາດ" ໃນເດືອນພະຈິກ 2017 ການນຳສອງຝ່າຍໄດ້ຢືນຢັນຄືນອີກຄັ້ງໜຶ່ງເຖິງຄວາມຮັບຮູ້ການເປັນຄູ່ຮ່ວມຊາຕາກຳລາວ - ຈີນ; ການນຳສອງຝ່າຍເຫັນດີເປັນເອກະພາບກັນເລີ່ມຕົ້ນສ້າງ "ແຜນແມ່ບົດ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳລາວ - ຈີນ", ພ້ອມກັນນັ້ນກໍໄດ້ລົງນາມຮ່ວມກັນໃນວັນທີ 30 ເມສາ 2019 ທີ່ນະຄອນຫຼວງປັກກິ່ງ ສປ ຈີນ. ອັນພົ້ນເດັ່ນແມ່ນ ສປປ ລາວ ແລະ ສປ ຈີນ ລົງນາມໃນແຜນແມ່ບົດ ວ່າດ້ວຍການຮ່ວມມືກັນຊຸກຍູ້ເພື່ອສ້າງ "ໜຶ່ງແລວ ໜຶ່ງເສັ້ນທາງ" ທີ່ປິ່ນອ້ອມກໍຄືມີການສ້າງແມ່

ບົດແລວເສດຖະກິດລາວ - ຈີນ, ພ້ອມດຽວກັນນັ້ນ ສປປ ລາວ ໄດ້ເປີດສະຖານກົງສຸນໃຫຍ່ແຫ່ງ ສປປ ລາວ ຕື່ມອີກ ທີ່ນະຄອນຊາງຊາ ເພື່ອເປັນການສົ່ງເສີມການພົວພັນລະຫວ່າງສອງປະເທດ.

**III. ສືບຕໍ່ເສີມຂະຫຍາຍມູນເຊື້ອວັນຊາດທີ 2 ທັນວາ.**

1. ຄະນະພັກແຕ່ລະຂັ້ນສືບຕໍ່ຊີ້ນຳ-ນ□າພາ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກເຂົ້າສູ່ຊີວິດຕົວຈິງ ໂດຍສະເພາະແມ່ນຕ້ອງກຳແໜ້ນ 9 ໜ້າທີ ວຽກງານຕົ້ນຕໍຄື: (1). ສືບຕໍ່ບູລະນະລະບອບ ປະຊາທິປະໄຕ ປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ, ສ້າງການຫັນປ່ຽນແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ເພື່ອກ້າວເຂົ້າສູ່ຈຸດໝາຍສັງຄົມນິຍົມ (2). ຍົກລະດັບຄວາມຮູ້ຄວາມສາມາດ ໃນການປົກປອງອາທິປະໄຕ, ຮັກສາສະຖຽນລະພາບທາງດ້ານການເມືອງ ແລະ ຄວາມສະຫງົບສຸກຂອງສັງຄົມ (3). ເສີມຂະຫຍາຍທຸກຄວາມອາດສາມາດ ແລະ ທ່າແຮງບົ່ມຊ້ອນ(4). ສ້າງຖານການຜະລິດ ແລະ ການບໍລິການໃຫ້ເຂັ້ມແຂງ, ຮັບປະກັນການພົວພັນແບບຍືນຍົງ ແລະ ເປັນເຈົ້າຕົນເອງ (5). ພັດທະນາຊັບພະຍາກອນມະນຸດຢ່າງແຂງແຮງ, ສ້າງສັງຄົມທີ່ປະຊາຊົນເປັນເຈົ້າ, ມີປະຊາທິປະໄຕ, ສະເໝີພາບ ແລະ ຍຸຕິທຳ (6) ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວຂອງບັນດາອົງການກຳອຳນາດລັດ ໃຫ້ເຂັ້ມແຂງ ແລະ ມີປະສິດທິພົນ (7). ເພີ່ມທະວີຄວາມເປັນເຈົ້າການປະຕິບັດການພົວພັນກັບຕ່າງປະເທດ, ສ້າງເງື່ອນໄຂສະດວກ ແລະ ນຳຜົນປະໂຫຍດຕົວຈິງມາໃຫ້ການພັດທະນາປະເທດຊາດ (8) ເດັດດຽວແກ້ໄຂຈຸດອອ່ນ-ຂໍຄົງຄ້າງພາຍໃນພັກ, ຮັບປະກັນບົດບາດການເຄື່ອນໄຫວນ□າພາຕົວຈິງທີ່ເຂັ້ມແຂງຂອງການຈັດຕັ້ງທຸກຂັ້ນ(9). ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ.

2. ຄະນະພັກທຸກຂັ້ນຕ້ອງສືບຕໍ່ນຳພາການຈັດຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຂອງລັດຄັ້ງທີ **IX** ໂດຍສະເພາະແມ່ນການສືບຕໍ່ຈັດຕັ້ງປະຕິບັດ, 6 ວຽກງານໃຫ້ປະກົດຜົນເປັນຈິງຄື: ພັດທະນາເສດຖະກິດແຫ່ງຊາດ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ; ສ້າງຊັບພະຍາກອນມະນຸດ ມີຄຸນນະພາບສູງຂຶ້ນ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ ເຕັກໂນໂລຢີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມໃນການຜະລິດ ແລະ ການບໍລິການ; ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ; ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ ແລະ ຫລຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ; ສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ ສາມາດນຳໃຊ້ທ່າແຮງ, ກາລະໂອກາດ ທີ່ຕັ້ງ, ເຂົ້າຮ່ວມ ຂະບວນການຮ່ວມມື, ການເຊື່ອມໂຍງ ກັບພາກພື້ນ ແລະ ສາກົນຢ່າງເປັນຢ່າງເປັນເຈົ້າການ; ຄຸ້ມຄອງ-ບໍລິການລັດໃຫ້ມີປະສິດທິພາບ, ສັງຄົມມີຄວາມສະເໝີພາບ, ຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທິດການປົກຄອງດ້ວຍກົດໝາຍທີສັກສິດ ແລະ ເຂັ້ມງວດ.

3. ຄະນະພັກທຸກຂັ້ນຕ້ອງເພີ່ມທະວີວຽກໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າໃຫ້ເຊີດຊູ ນໍ້າໃຈຮັກຊາດ, ເອກະລາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອສ້າງປະເທດຊາດໃຫ້ມັ່ງຄັ່ງເຂັ້ມແຂງ ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ຍຸຕິທຳ ແລະ ສີວິໄລ.

4. ຄະນະພັກແຕ່ລະຂັ້ນ ເພີ່ມທະວີວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ໃນການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ 19, ພ້ອມກັນນັ້ນ ກໍເອົາໃຈໃສ່ໃນການສຶກສາອົບຮົມ ແນວຄິດ ໃຫ້ທົ່ວສັງຄົມໃນການປັບປຸງວິຖີການດຳລົງຊີວິດແບບໃໝ່, ການດຳລົງຊີວິດຫຼັງການລະບາດຂອງພະຍາດໂຄວິດ-19 ໃຫ້ມີຄຸນນະພາບ.

**ສະຫຼຸບ:** ພາຍຫລັງປະເທດຊາດເຮົາ ໄດ້ຮັບການສະຖາປະນາເປັນປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວຂຶ້ນ ໃນວັນທີ 2 ທັນວາ 1975 ພັກປະຊາຊົນປະຕິວັດລາວ ໄດ້ນຳພາທົ່ວປວງຊົນລາວບັນດາເຜົ່າ ປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາປະເທດຊາດ ແລະ ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ ຕາມຈຸດໝາຍສັງຄົມນິຍົມ. ຜ່ານການຈັດຕັ້ງປະຕິບັດເປັນເວລາ 46 ປີ, ຄຽງຄູ່ກັບມີຂໍ້ສະດວກທີ່ເປັນພື້ນຖານຫຼາຍດ້ານ ກໍໄດ້ປະສົບຄວາມຫຍຸ້ງຍາກນາໆປະການຫຼາຍຢ່າງເຊັ່ນກັນ ຍ້ອນເງື່ອນໄຂດ້ານຕ່າງໆ ຂອງພາຍໃນປະເທດ ສຳລັບການຮັບປະກັນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ມີຄວາມຈຳກັດຫຼາຍ ໃນນັ້ນ ມີທັງປະເຊີນກັບກົນອຸບາຍມ້າງເພທຳລາຍນະໂຍບາຍໃໝ່ ຂອງພວກອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ ທັງປະສົບກັບໄພພິບັດທາງທຳມະຊາດຢ່າງຕໍ່ເນື່ອງ; ສິ່ງສຳຄັນແມ່ນກຳລັງການຜະລິດ ແລະ ພື້ນຖານໂຄງລ່າງກໍຄືວັດຖຸເຕັກນິກ ໃນທຸກຂົງເຂດວຽກງານ ຍັງຢູ່ໃນລັກສະນະປະຖົມປະຖານ ກວມອັດຕາສ່ວນສູງ. ແຕ່ພັກໄດ້ມີຄວາມສະດຸ້ງໄວ ແລະຫັນປ່ຽນໃນການນຳພາຂອງຕົນ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ຂອງປະເທດຊາດ ແລະ ສາກົນດ້ວຍການວາງແນວ ທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການ ທັງມີການປັບປຸງບູລະນະຢ່າງບໍ່ຢຸດຢັ້ງຕະຫຼອດມາ ອັນໄດ້ເປັນປັດໄຈພື້ນຖານ ແລະ ສຳຄັນໃຫ້ແກ່ການປົກປັກຮັກສາຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ໄດ້ຢ່າງໝັ້ນຄົງ; ເສດຖະກິດ - ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດຫັນເປັນອຸດສາຫະກຳ - ທັນສະໄໝ; ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ ໄດ້ຮັບການເສີມຂະຫຍາຍ ແລະ ເປີດກວ້າງອອກໃນສັງຄົມ; ຄວາມສາມັກຄີເປັນເອກະພາບພາຍໃນຊາດ ນັບມື້ໄດ້ຮັບການປັບປຸງດີຂຶ້ນ; ທີ່ຕັ້ງບົດບາດອິດທິພົນ ຂອງປະເທດຊາດເຮົາ ໄດ້ຮັບການເຊີດຊູສູງຂຶ້ນ ໃນເວທີສາກົນ ແລະ ພາກພື້ນ.

ເພື່ອສືບຕໍ່ຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ຂອງພັກ, ປະຕິບັດໜ້າທີ່ປົກປັກຮັກສາປະເທດຊາດ ແລະ ໝາກຜົນຂອງການປະຕິວັດໄວ້ໃຫ້ໝັ້ນຄົງ; ພວກເຮົາຕ້ອງໄດ້ສ້າງບາດ ລ້ຽວໃໝ່ໃຫ້ແກ່ການສ້າງ ແລະ ເສີມຂະຫຍາຍລະບອບປະຊາທິປະໄຕ ປະຊາຊົນ ຕາມຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ, ເຮັດໃຫ້ປະຊາຊົນຮັ່ງມີ, ມີຄວາມຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

## ຄຳຂວັນໂຄສະນາ-ປຸກລະດົມ

- ຊົມເຊີຍວັນ ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 46 ປີ ຢ່າງສຸດໃຈ!
- ນ້ຳໃຈ ວັນຊາດ ທີ 2 ທັນວາ ໝັ້ນຍືນ!
- ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝັ້ນຍືນ!